ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

******************

ກະຊວງໂຍທາທິການ ແລະ ຂົນສົ່ງ — ເລກທີ 17254---/ຍທຂ

ນະຄອນຫຼວງວຽງຈັນ, ວັນທີ 28 OCT 2011

**ຄຳສັ່ງແນະນຳ**

**ຂອງລັດຖະມົນຕີວ່າການ**

**ວ່າດ້ວຍ ການກະກຽມຈັດຕັ້ງວັນສັກຢາກັນພະຍາດແຫ່ງຊາດ**

**ເພື່ອກຳຈັດພະຍາດໝາກແດງໃນທົ່ວປະເທດ ໃນທ້າຍປີ 2011**

(ກຸ່ມເປົ້າໝາຍແມ່ນ ອາຍຸ ແຕ່ 9 ເດືອນ ຫາ 19 ປີ ທັງຍິງ ແລະ ຊາຍ)

**ເຖິງ : ຫ້ອງການກະຊວງ, ບັນດາກົມ, ພະແນກໂຍທາທິການ ແລະ ຂົນສົ່ງ ຂອງ ແຂວງ, ນະຄອນຫລວງວຽງຈັນ, ຫ້ອງການ ຍທຂ ປະຈຳເມືອງ ແລະ ຫົວໜ່ວຍທຸລະກິດຂົນສົ່ງໂດຍສານ ທັງພາກລັດ ແລະ ເອກກະຊົນ ທຸກປະເພດ ທຸກຂັ້ນ ໃນທົ່ວປະເທດ.**

- ອີງຕາມ ແຜນງານ ຂອງລັດຖະບານວ່າດ້ວຍ ການກຳຈັດພະຍາດໝາກແດງໃນປີ 2012.
- ອີງຕາມ ຄຳສັ່ງແນະນຳ ຂອງທ່ານຮອງນາຍົກລັດຖະມົນຕີ ປະທານຄະນະກຳມາທິການເພື່ອແມ່ ແລະເດັກແຫ່ງຊາດ ເລກທີ 006/ຄມດຊ/11, ລົງວັນທີ 12 ສິງຫາ 2011.
- ອີງໃສ່ ຄຳສັ່ງແນະນຳ ຂອງລັດຖະມົນຕີວ່າການກະຊວງສາທາລະນະສຸກ ສະບັບເລກທີ 1126/ກຊສ, ລົງວັນທີ 29/9/2011 ວ່າດ້ວຍກັບການກະກຽມຈັດຕັ້ງວັນສັກຢາກັນພະຍາດແຫ່ງຊາດເພື່ອກຳຈັດພະຍາດໝາກແດງໃນທົ່ວປະເທດ ໃນທ້າຍ ປີ 2011.
- ອີງຕາມ ຄວາມຮຽກຮ້ອງຕ້ອງການຕົວຈິງ ໃນການກະກຽມ ແລະ ຈັດຕັ້ງປະຕິບັດ ວສຊ ເພື່ອ ກຳຈັດພະຍາດໝາກແດງໃຫ້ມີຄວາມພ້ອມຮອບດ້ານ ແລະ ຮັບປະກັນໃຫ້ບັນລຸ 95% ຂຶ້ນໄປ.

**ລັດຖະມົນຕີວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ ອອກຄຳສັ່ງ:**

1. ໃຫ້ບັນດາທ່ານການນຳຂັ້ນກະຊວງ, ຫ້ອງການ, ບັນດາກົມ, ກອງ, ສະຖາບັນ ຍທຂ, ສະພາວິທະຍາສາດ ແລະ ເຕັກໂນໂລຊີ, ສູນຝຶກ ແລະ ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫລວງວຽງຈັນ, ຫ້ອງການຍທຂປະຈຳເມືອງ ແລະ ບັນດາຫົວໜ່ວຍທຸລະກິດຂົນສົ່ງໂດຍສານທັງພາກລັດ ແລະ ເອກກະຊົນ ທຸກປະເພດ ທຸກຂັ້ນ ໃນທົ່ວປະເທດ ຈົ່ງໄດ້ເອົາໃຈໃສ່ຊີ້ ນຳກະກຽມການປະກອບສ່ວນດ້ານການອຳນວຍຄວາມສະດວກໃນການຂົນສົ່ງວັດຖຸສິ່ງຂອງ ແລະ ນະໂຍບາຍບໍ່ເກັບຄ່າ ຫລື ຫລຸດ 50% ຄ່າໂດຍສານ ສຳລັບແພດໝໍທີ່ໄປສັກຢາກັນພະຍາດ. ໃນເວລາປະຕິບັດ ວັນສັກຢາ

ກັນພະຍາດແຫ່ງຊາດໃນຂອບເຂດຂອງແຂວງຕົນເອງ. ສຳລັບ 4 ແຂວງພາກໃຕ້: ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື ແມ່ນລະຫວ່າງວັນທີ 1-14 ພະຈິກ 2011, ສ່ວນ 13 ແຂວງທີ່ເຫຼືອແມ່ນ ລະຫວ່າງວັນທີ 21 ພະຈິກ ຫາ 06 ທັນວາ 2011. ເພື່ອຄວາມສະດວກ, ແນະນຳໃຫ້ຂະແໜງ ໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ ອອກບັດໃຫ້ແພດໝໍ, ຄວນໃຊ້ໄດ້ໃນແຕ່ໄລຍະວັນສັກຢາກັນພະຍາດແຫ່ງຊາດເທົ່ານັ້ນ ແລະ ໃຫ້ແພດໝໍສະແດງບັດດັ່ງກ່າວ ໃຫ້ເຈົ້າຂອງພະຫະນະຂົນສົ່ງ ໃນເວລາເດີນທາງ.

2. ໃຫ້ຂະແໜງໂຍທາທິການ ແລະຂົນສົ່ງ ທຸກຂັ້ນ ປະສານງານນຳ ຂະແໜງສາທາລະນະສຸກ ລ່ວງໜ້າ ພ້ອມທັງ ປະສານງານນຳໜ່ວຍແພດໃນຂັ້ນຂອງຕົນ, ເອົາໃຈໃສ່ນັດໝາຍກັນໃຫ້ລະອຽດກ່ຽວ ກັບແຜນການເຄື່ອນໄຫວໃນແຕ່ລະວັນເພື່ອໃຫ້ການເດີນທາງໄປເຖິງທີ່ໝາຍກົງກັບເວລານັດໝາຍກັບປະຊາຊົນ. ຖ້າເປັນໄປໄດ້ກໍ ໃຫ້ຊ່ວຍຂົນສົ່ງເອົາກຸ່ມເປົ້າໝາຍ ອາຍຸແຕ່ 9 ເດືອນ ຫາ 19 ປີ ມາຫາຈຸດບໍລິການໃນບ້ານຂອງເຂົາເຈົ້າເອງດ້ວຍ.
3. ໃຫ້ຂະແໜງໂຍທາທິການ ແລະຂົນສົ່ງ ທຸກຂັ້ນ ທັງພາກລັດ ແລະ ເອກກະຊົນຊ່ວຍເປັນກະບອກສຽງເຜີຍແຜ່ຂໍ້ມູນຂ່າວສານ ໄປຍັງພໍ່ແມ່ປະຊາຊົນບັນດາເຜົ່າໃນບ້ານຂອງຕົນເອງ ຫລືບ້ານໃກ້ຄຽງເພື່ອຮັບຊາບເຖິງ ຄວາມສຳຄັນ ຂອງ ວັນສັກຢາກັນພະຍາດແຫ່ງຊາດຄັ້ງນີ້ ແລະ ໃຫ້ຕິດຕາມການນັດໝາຍຂອງແພດໝໍທີ່ຈະລົງມາສັກຢາ ຢູ່ບ້ານຂອງຕົນເອງ. ໃຫ້ຊ່ວຍລະດົມປະຊາຊົນ ມາຮັບການບໍລິການສັກຢາໃຫ້ຄົບທຸກຖ້ວນໜ້າ ແລະ ຊ່ວຍເປັນ ເຈົ້າການໃນການຕິດປ້າຍໂຄສະນາ, ແຈກຢາຍສື່ໂຄສະນາຕ່າງໆ ໃຫ້ໄປຮອດໄປເຖິງປະຊາຊົນທຸກແຫ່ງຫົນ.
4. ຂະແໜງໂຍທາທິການ ແລະ ຂົນສົ່ງ ທຸກຂັ້ນຕ້ອງລົງຕິດຕາມ ຂັ້ນລຸ່ມຂອງຕົນເອງເພື່ອກະກຽມຄວາມພ້ອມ, ພິເສດ ຕ້ອງກວດກາຄືນການກະກຽມອາທິດໜຶ່ງ ກ່ອນຮອດວັນສັກຢາ ທັງນີ້ ກໍເພື່ອຮັບຊາບ ແລະ ແກ້ໄຂບາງ ບັນຫາທີ່ອາດ ບໍ່ທັນກະກຽມໄດ້ດີ ແລະ ໃຫ້ຮີບຮ້ອນແກ້ໄຂ ໃຫ້ທັນເວລາ. ພິເສດໃຫ້ຈັດກຽມພາຫະນະໄປສົ່ງວັກຊີນ ແລະ ລະບົບເຢັນ ພ້ອມທັງວັດຖຸອຸປະກອນ ໃຫ້ໄປເຖິງເຂດ ຫຍຸ້ງຍາກຫ່າງໄກສອກຫລີກໃຫ້ທັນເວລາ.
5. ໃຫ້ຮີບຮ້ອນຈັດກອງປະຊຸມເຜີຍແຜ່ຄຳສັ່ງແນະນຳສະບັບນີ້ ແກ່ຂະແໜງການໂຍທາທິການ ແລະ ຂົນສົ່ງໃນຂັ້ນຂອງຕົນເອງຢ່າງຮີບດ່ວນ. ເພາະວັນສັກຢາຈະເລີ່ມວັນ 01-14 ພະຈິກ ຢູ່ 4 ແຂວງພາກໃຕ້: ຈຳປາສັກ, ສາລະວັນ, ເຊກອງ ແລະ ອັດຕະປື. ສ່ວນ 13 ແຂວງທີ່ເຫລືອນັ້ນແມ່ນເລີ່ມສັກແຕ່ວັນທີ 21 ພະຈິກ ເຖິງ 06 ທັນວາ 2011.
6. ມອບໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮີບຮ້ອນຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ຕາມຄວາມຮັບຜິດຊອບຂອງຕົນຢ່າງຮັດກຸມ ແລະ ມີນ້ຳໃຈຮັບຜິດຊອບສູງ.
7. ຄຳສັ່ງແນະນຳສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

<u>ສຳເນົານຳສົ່ງ:</u>

- ປະທານ ຄມດຊ — 01 ສະບັບ ເພື່ອຊາບ
- ຫ້ອງການກະຊວງສາທາລະນະສຸກ — 01 ສະບັບ ເພື່ອຊາບ
- ສຳເນົາ — 01 ສະບັບ



**ສົມມາດ ພົລເສນາ**